ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາແລະການຄ້າ
ເຂົ້າ ເລກທີ 2046
ວັນທີ 16/10/20

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 1131 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 15 - 10 - 2020

# ແຈ້ງການ

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງການຕ່າງປະເທດ.
- ທ່ານ ເຈົ້າແຂວງຫຼວງນໍ້າທາ.

**ເລື່ອງ:** ທິດຊີ້ນໍາກ່ຽວກັບ ການຂໍອະນຸຍາດໃຫ້ເປີດດ່ານທ້ອງຖິ່ນປາງໄຮ, ເມືອງສິງ, ແຂວງຫຼວງນໍ້າທາ ເພື່ອຂົນສົ່ງສິນຄ້າເຂົ້າ-ອອກ ສປປລາວ ແລະ ການສະເໜີນໍາເຂົ້າຄົນ, ລົດຮັບໃຊ້ບໍລິຫານ ແລະ ລົດບັນທຸກ ເພື່ອມາຮັບໃຊ້ ແລະ ຂົນສົ່ງອ້ອຍອອກໄປ ສປ ຈີນ ຂອງແຂວງຫຼວງນໍ້າທາ.

- ອີງຕາມໜັງສືສະເໜີ ສະບັບເລກທີ 94/ຈຂ, ລົງວັນທີ 29 ກັນຍາ 2020 ຂອງແຂວງຫຼວງນໍ້າທາ.
- ອີງຕາມການຕົກລົງ ແລະ ຊີ້ນໍາຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 13 ຕຸລາ 2020.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນໍາຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບດັ່ງນີ້:

**1. ເຫັນດີອະນຸມັດ ໃຫ້ເປີດດ່ານທ້ອງຖິ່ນປາງໄຮ, ແຂວງຫຼວງນໍ້າທາ ສໍາລັບຂົນສົ່ງສິນຄ້າເຂົ້າ-ອອກ ສປປ ລາວ ທີ່ມີຄວາມຈໍາເປັນ ນັບແຕ່ວັນທີ 01 ພະຈິກ ຫາວັນທີ 30 ມິຖຸນາ 2021 ຕາມການສະເໜີ ແຕ່ໃຫ້ປະຕິບັດຕາມລະບຽບການຂົນສົ່ງສິນຄ້າເຂົ້າ-ອອກ ທີ່ສອງຝ່າຍໄດ້ຕົກລົງ ແລະ ປະຕິບັດຜ່ານມາ ໃນໄລຍະທີ່ປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດ COVID-19.**

2. ມອບໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ແຂວງຫຼວງນໍ້າທາ ແລະ ພາກສ່ວນກ່ຽວຂ້ອງ ແຕ່ງຕັ້ງຜູ້ຕາງໜ້າຈາກຂະແໜງການຕົນ ສົມທົບກັນລົງໄປຕິດຕາມ, ກວດກາ ແລະ ມີມາດຕະການຄຸ້ມຄອງ ໃນການຂົນສົ່ງສິນຄ້າເຂົ້າ-ອອກ ປະຈໍາຢູ່ດ່ານທ້ອງຖິ່ນປາງໄຮ, ເມືອງສິງ, ແຂວງຫຼວງນໍ້າທາ ຢ່າງເຂັ້ມງວດ. **ສໍາລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ** ແມ່ນສືບຕໍ່ຢຸດ ຕາມແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ **1049/ຫສນຍ, ລົງວັນທີ 30 ກັນຍາ 2020.**

3. ເຫັນດີອະນຸມັດໃຫ້ບໍລິສັດ ຍົງເມົາ ສົ່ງເສີມປູກອ້ອຍ ຂາອອກ-ຂາເຂົ້າ ຈໍາກັດ ນໍາເຂົ້າແຮງງານ ຈໍານວນ 148 ຄົນ (ພະນັກງານຄຸ້ມຄອງ ແລະ ບໍລິຫານໂຄງການຈາກ ສປ ຈີນ 17 ຄົນ ແລະ ຄົນຂັບລົດ 131 ຄົນ) ແລະ ລົດຮັບໃຊ້ ຈໍານວນ 136 ຄັນ (ລົດຮັບໃຊ້ບໍລິຫານ 5 ຄັນ ແລະ ລົດບັນທຸກອ້ອຍ 131 ຄັນ) ເຂົ້າມາ ສປປ ລາວ ຕາມລະບຽບການຂອງຂະແໜງການກ່ຽວຂ້ອງ ໂດຍຜ່ານດ່ານທ້ອງຖິ່ນປາງໄຮ, ເມືອງສິງ, ແຂວງຫຼວງນໍ້າທາ ເພື່ອກະກຽມສົ່ງອ້ອຍອອກໄປ ສປ ຈີນ, ແຕ່ໃນການປະຕິບັດຕົວຈິງ ໃຫ້ບໍລິສັດສ້າງແຜນສົ່ງອອກສິນຄ້າດັ່ງກ່າວໃຫ້ລະອຽດ.

ມອບໃຫ້ຄະນະສະເພາະກິດ COVID-19 ຂັ້ນແຂວງ ເປັນຜູ້ກວດກາ ແລະ ອະນຸມັດຕົວຈິງ, ພ້ອມທັງກະກຽມສະຖານທີ່ຈຳກັດບໍລິເວນໃຫ້ພຽງພໍ, ກວດຫາເຊື້ອພະຍາດ ແລະ ຈຳກັດບໍລິເວນ ຜູ້ເດີນທາງເຂົ້າມາ 14 ວັນ ຕາມລະບຽບການ ແລະ ປະຕິບັດມາດຕະການປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ປ້ອງກັນການລະບາດຂອງພະຍາດ COVID-19 ທີ່ຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມປອດໄພ.

<u>ໝາຍເຫດ</u>: ໜັງສືສະເໜີ ສະບັບເລກທີ 94/ຈຂ, ລົງວັນທີ 29 ກັນຍາ 2020 ຂອງແຂວງຫຼວງນໍ້າທາ ແລະ ເອກະສານທີ່ກ່ຽວຂ້ອງ ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ</u>:

1. ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ
4. ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ
5. ກະຊວງສາທາລະນະສຸກ 01 ສະບັບ
6. ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ
7. ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ ✓
8. ຄະນະ ຫສນຍ ທ່ານລະ 01 ສະບັບ
9. ກົມກວດກາ, ຫສນຍ 01 ສະບັບ
10. ສຳເນົາ 01 ສະບັບ